

ຊື່ຜູ້ລົງສະໝັກເລືອກຕັ້ງ: Alexis Mercedes Rinck

ຊື່ການໂຄສະນາຫາສຽງ: Alexis ສໍາລັບ Seattle

ເວັບໄຊການໂຄສະນາຫາສຽງ: alexisforseattle.com

**ຕໍາແໜ່ງໃນເມືອງ:** 8

ເບີໂທລະສັບການໂຄສະນາຫາສຽງ: 206-705-9305

ດ້ວຍປະສົບການໃນການສະໜັບສະໜູນການບໍລິການມະນຸດ ແລະ ນະໂຍບາຍສາທາລະນະສຸກ, ຊີ້ນໍາແຜນຕອບໂຕ້ການຂາດທີ່ຢູ່ອາໄສສຸກເສີນ ແລະ ກໍານົດນະໂຍບາຍການເງິນ ແລະ ການງົບປະມານຢູ່ມະຫາວິທະຍາໄລ University of Washington, ຂ້າພະເຈົ້າຈະນໍາເອົາຄວາມຊ່ຽວຊານທີ່ຈໍາເປັນມາສູ່ສະພາເມືອງ ເພື່ອຂະຫຍາຍທີ່ຢູ່ອາໄສລາຄາຈັບຕ້ອງໄດ້ທີ່ພວກເຮົາຕ້ອງມີ, ຊຸມຊົນປອດໄພທີ່ພວກເຮົາທຸກຄົນຄວນໄດ້ຮັບ, ການດໍາເນີນການເພື່ອຊ່ວຍຄົນໃນສະພາບວິກິດ ແລະ ການລົງທຶນໃນຊຸມຊົນທີ່ບັບປຸງຄວາມສະເໝີພາບ ແລະ ໂອກາດ.

ຄວາມມຸ່ງໝັ້ນຂອງຂ້າພະເຈົ້າໃນການຮັບໃຊ້ປະຊາຊົນເກີດມາຈາກປະສົບການສ່ວນຕົວທີ່ແບ່ງປັນໂດຍຫຼາກຫຼາຍຄົນໃນເມືອງ Seattle ໃນທຸກມື້ນີ້. ຂ້າພະເຈົ້າເກີດຈາກພໍ່ແມ່ໄວໜຸ່ມທີ່ລໍາບາກ ແລະ ຖືກລ້ຽງມາໂດຍພໍ່ໃຫຍ່ແມ່ໃຫຍ່ຂອງຂ້າພະເຈົ້າ. ຄອບຄົວຂອງຂ້າພະເຈົ້າເຄີຍຮັບມືກັບວົງຈອນທີ່ເຈັບຊໍ້າຂອງການກັກຂັງ, ການໃຊ້ສານເສບຕິດ ແລະ ການບໍ່ມີເຮືອນຢູ່ອາໄສ. ຂ້າພະເຈົ້າຮູ້ສຶກຂອບໃຈທີ່ໄດ້ມີການສະໜັບສະໜູນໃນຊຸມຊົນຂອງຂ້າພະເຈົ້າທີ່ປູເສັ້ນທາງໄປສູ່ຄວາມສໍາເລັດໃຫ້ຂ້າພະເຈົ້າ - ແລະ ຂ້າພະເຈົ້າຕ້ອງການຮັບປະກັນໃຫ້ຄົນໜຸ່ມທຸກຄົນໃນເມືອງ Seattle ມີໂອກາດແບບດຽວກັນເຫຼົ່ານັ້ນ.

ຂ້າພະເຈົ້າພ້ອມແລ້ວທີ່ຈະນໍາເອົາມຸມມອງ ແລະ ຄວາມຫຼົງໄຫຼທີ່ມີຂໍ້ມູນຄົບຖ້ວນຂອງຂ້າພະເຈົ້າເພື່ອສ້າງປະໂຫຍດໃຫ້ແກ່ສະພາເມືອງ ແລະ ເປັນກະບອກສຽງໃຫ້ແກ່ປະຊາຊົນທຸກຄົນຂອງເມືອງ Seattle. ພວກເຮົາພະເຊີນກັບສິ່ງທ້າທານຮີບດ່ວນທີ່ຮຽກຮ້ອງໃຫ້ມີຄວາມຄິດ, ພະລັງງານ ແລະ ການນໍາພາໃໝ່ໆ. ດ້ວຍຄູປ໋ອງ ແລະ ຄະແນນສຽງຂອງບັນດາທ່ານ ຂ້າພະເຈົ້າຈະສ້າງຈາກປະສົບການການສະໜັບສະໜູນ ແລະ ການດໍາເນີນການຂອງຂ້າພະເຈົ້າເພື່ອໃຫ້ເມືອງ Seattle ເປັນທີ່ຈັບຕ້ອງໄດ້, ເປັນທີ່ຕ້ອນຮັບ ແລະ ປູເສັ້ນທາງໄປສູ່ອະນາຄົດທີ່ດີກວ່າ.

*ຜູ້ລົງສະໝັກເລືອກຕັ້ງນີ້ກໍາລັງເຂົ້າຮ່ວມໃນໂຄງການຄູປ໋ອງບໍລິຈາກສົ່ງເສີມປະຊາທິປະໄຕ (Democracy Voucher Program).*



**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Tariq Yusuf

**ຊື່ໂຄສະນາຫາສຽງ:** Tariq ສໍາລັບສະພາ

**ເວັບໄຊໂຄສະນາຫາສຽງ:** tariqforcouncil.org

**ຕໍາແໜ່ງໃນສະພາເທດສະບານເມືອງ:** 8

**ເບີໂທລະສັບໂຄສະນາຫາສຽງ:** 206-395-9356

ເລື່ອງຂອງຂ້າພະເຈົ້າແມ່ນເລື່ອງຂອງເມືອງຊີອາເຕິລ. ພໍ່ຂອງຂ້າພະເຈົ້າເປັນຄົນອິນໂດເນເຊຍ ແລະ ແມ່ເປັນຄົນອາເມຣິກາ; ຂ້າພະເຈົ້າໄດ້ເຫັນການປ່ຽນແປງ ແລະ ການຈະເລີນເຕີບໂຕຂອງພາກພື້ນນີ້ໃນສອງທົດສະວັດທີ່ຜ່ານມາ. ພໍ່ແມ່ຂອງຂ້າພະເຈົ້າເພິ່ງພາອາໄສໂຄງການສັງຄົມສົງເຄາະຂອງເມືອງ ແລະ ຂອງລັດທີ່ສໍາຄັນຢ່າງຫຼວງຫຼາຍເຊັ່ນ: ອົງການທີ່ຢູ່ອາໄສຂອງເມືອງຊີອາເຕິລ (Seattle Housing Authority). ໂຄງການເຫຼົ່ານີ້ໄດ້ຊ່ວຍໃຫ້ພວກເຮົາຫຼຸດພົ້ນຈາກການເປັນຄົນບໍ່ມີທີ່ຢູ່ອາໄສ ແລະ ສ້າງຊີວິດໃຫ້ປະສົບຜົນສໍາເລັດໄດ້. ຂ້າພະເຈົ້າສາມາດຮຽນຈົບສໍາເລັດການສຶກສາທີ່ University of Washington (ມະຫາວິທະຍາໄລວໍຊິງຕັນ), ປະສົບຄວາມສໍາເລັດໃນດ້ານວຽກເຮັດງານທໍາໃນອຸດສາຫະກໍາເຕັກໂນໂລຊີ ແລະ ເລີ່ມສ້າງຄອບຄົວຂອງຕົນເອງໄດ້. ເຖິງແມ່ນວ່າພໍ່ແມ່ຂອງຂ້າພະເຈົ້າຈໍາເປັນຕ້ອງດີ້ນຮົນຕໍ່ສູ້, ແຕ່ພວກເພິ່ນກໍ່ໄດ້ລ້ຽງຂ້າພະເຈົ້າໃຫ້ເຕີບໃຫຍ່ດ້ວຍການເຫັນຄຸນຄ່າຂອງຄວາມເອົາໃຈໃສ່ , ຄວາມເຫັນອົກເຫັນໃຈ ແລະ ຄວາມຍຸຕິທໍາ;
ເຊິ່ງເປັນຄຸນຄ່າທີ່ຂ້າພະເຈົ້າຫວັງວ່າຈະເອົາມາໃຊ້ໃນການປະຕິບັດໜ້າທີ່ໃນສະພາເທດສະບານເມືອງ.

ຄວາມຝັນແບບອາເມຣິກາຂອງຂ້າພະເຈົ້າເປັນຈິງໄດ້; ແຕ່ການເດີນທາງແມ່ນເລີ່ມຈະຍາກຂຶ້ນເລື້ອຍໆສໍາລັບຫຼາຍໆຄອບຄົວໃນທຸກມື້ນີ້.
ການບໍລິການສັງຄົມສົງເຄາະທີ່ເຮັດໃຫ້ເລື່ອງຂອງຂ້າພະເຈົ້າໃຫ້ສໍາເລັດໄດ້ແມ່ນບໍ່ສາມາດເຂົ້າເຖິງໄດ້ອີກຕໍ່ໄປ.
ຂ້າພະເຈົ້າຕ້ອງການປ່ຽນແປງສິ່ງນັ້ນ.

ລັດຖະບານທີ່ປົກຄອງເມືອງມີບົດບາດສໍາຄັນໃນຊີວິດຂອງພວກເຮົາ; ໃນຖານະສະມາຊິກສະພາບະເທດສະບານເມືອງ ຂ້າພະເຈົ້າວາງແຜນທີ່ຈະໃຫ້ການສະໜັບສະໜູນປະຊາຊົນເຊັ່ນ: ພໍ່ແມ່ຂອງຂ້າພະເຈົ້າ,
ຜູ້ທີ່ປະສົບກັບການຕ້ອງລໍຖ້າເງິນເດືອນທີ່ເຫຼືອຢູ່ອີກພຽງໜຶ່ງເດືອນໃຫ້ພຽງພໍສໍາລັບຊ່ວງເວລານັ້ນ,
ຖ້າບໍ່ດັ່ງນັ້ນຈະກາຍເປັນຄົນບໍ່ມີທີ່ຢູ່ອາໄສ. ຂ້າພະເຈົ້າວາງແຜນທີ່ຈະຕອບແທນເມືອງນີ້ໂດຍການສະໜັບສະໜູນຄວາມເທົ່າທຽມກັນ, ຄວາມຍຸຕິທໍາ ແລະ ຄວາມເຫັນອົກເຫັນໃຈ, ຈະຊ່ວຍເຫຼືອຜູ້ທີ່ອ່ອນແອທີ່ສຸດໃນສັງຄົມ ແລະ ສັນຍາວ່າຈະຊ່ວຍເຫຼືອທຸກຄົນເພື່ອໃຫ້ພວກເຮົາສາມາດສ້າງຊຸມຊົນທີ່ສາມັກຄີກັນໄດ້.

*ຜູ້ສະໝັກຄົນນີ້ກໍາລັງເຂົ້າຮ່ວມໂຄງການບັດກໍານັບສະໜັບສະໜູນປະຊາທິປະໄຕ (Democracy Voucher Program).*